## ບົດນຳ

ແມງແຄງຍາວເປັນແມງໄມ້ສັດຕູພືດຊະນິດນຶ່ງທີ່ທຳລາຍຕົ້ນເຂົ້າ. ເຮັດໃຫ້ຜົນຜະລິດເສຍຫາຍ ແລະ ຕົກຕ່ຳ ແມງແຄງຍາວມັກຢູ່ໃນສະພາບດິນຟ້າ ອາກາດຢູ່ເຂດເຄິ່ງຮ້ອນ ແລະ ເຂດຮ້ອນຢູ່ໃນສປປລາວເຮົາແມງແຄງຍາວເຫັນວ່າເປັນແມງໄມ້ສັດຕູພືດຕົວສຳຄັນ ແລະ ອັນຕະລາຍທີ່ທຳລາຍເຂົ້າທັງລະດູແລ້ງ ແລະ ລະດູຝົນ

ດັ່ງນັ້ນ ເພື່ອບໍ່ຢາກໃຫ້ແມງແຄງທຳລາຍເຂົ້າຫຼາຍຈຶ່ງຈຳເປັນຕ້ອງໄດ້ຮູ້ວິທີການປ້ອງກັນ ແລະ ກຳຈັດແມງແຄງຍາວໃນນາເຂົ້າໃຫ້ຫຼຸດນ້ອຍຖອຍລົງດັ່ງລຸ່ມນີ້ :

## I. ຮູບຮ່າງລັກສະນະ

<u>ໂຕແກ່</u> ລຳໂຕຍາວ, ຮຽວ, ຂາຍາວ, ສີຂຽວອ່ອນນ້ຳຕານ. ໂຕທີ່ໃຫຍ່ຍາວປະມານ 14—17 ມີລີແມັດ .

<u>ໂຕອ່ອນ</u> ມີສີຂຽວເຫຼືອງ, ບໍ່ມີປີກ ແລະ ສັ້ນກວ່າໂຕແກ່

<u>ໄຂ່</u> ລັກສະນະການວາງໄຂ່ຂອງແມງແຄງ ຈະວາງລຽນກັນເປັນສອງແຖວດ້ວຍປະລິມານ 200—300 ໜ່ວຍ . ໄຂ່ເປັນສີແດງເຫຼື້ອມ .

## II. ເງື່ອນໄຂທີ່ເໝາະສົມໃນການຈະເລີນເຕີບໂຕ

ອຸນນະພູມທີ່ເໝາະສົມ ແລະ ຈະເລີນເຕີບໂຕຂອງແມງແຄງ 27—28 ອົງສາ, ແລະ ຄວາມຊຸ່ມຊື່ນປະມານ 80 —85 % RM . ທ້ອງຟ້າມີເມກປົກຄຸມ ແລະ ຝົນຝອຍ ເຮັດໃຫ້ແມງແຄງຂະຫຍາຍເພີ້ມຂື້ນ. ພື້ນທີ່ປູກເຂົ້າໃກ້ປ່າ ແລະ ມີຫຍ້າເຂົ້ານົກແມ່ນມີແມງແຄງຫຼາຍ ເພາະເປັນບ່ອນລີ້ຊ້ອນ ແລະ ວາງໄຂ່ຂະຫຍາຍພັນໄດ້ໄວ .

## III. ການທຳລາຍ

ແມງແຄງມີງວງດູດກິນອາຫານ. ແມງແຄງໂຕອ່ອນພາຍຫຼັງເບາະອອກມາໃໝ່ໆ ຈະດູດກິນນ້ຳໃນກາບຕົ້ນເຂົ້າ ໂຕເປັນບ່າວສາວ ແລະ ໂຕແກ່ຈະດູດກິນທາດອາຫານຢູ່ໃນເມັດເຂົ້າ ໂດຍສະເພາະແມ່ນຢູ່ໃນໄລຍະເຂົ້າເປັນ ນ້ຳນົມຈົນເຖິງໄລຍະເລີ້ມສຸກ .

### 3.1 ລັກສະນະຂອງການທຳລາຍ

- ເຮັດໃຫ້ເມັດເຂົ້າເປັນຈຸດສີນ້ຳຕານ
- ເມັດເຂົ້າຖືກທຳລາຍເປັນຮອຍຊ້ຳ ແລະ ສີດຳ ຫຼື ເຮັດໃຫ້ເມັດເຂົ້າຫັກເມື່ອເອົາໄປຕຳ ຫຼື ສີ, ມີກິ່ນຂີວ ແລະ ເຮັດໃຫ້ເມັດເຂົ້າລີບ .

### 3.2 ໄລຍະເວລາການທຳລາຍ

ແມງແຄງຈະມັກທຳລາຍເມັດເຂົ້າເປັນນ້ຳນົມຫາເມັດເຂົ້າເປັນນ້ຳນົມຫາເມັດເຂົ້າສຸກ ແລະ ຈະຢູ່ໄລຍະຕອນເຊົ້າເວລາປະມານ 8—10 ໂມງ.

**ວົງຈອນຊີວິດ** ປະມານ 23—34 ວັນຮອບວຽນໃນການຂະຫຍາຍຕົວ ຂອງແມງແຄງຍາວ .

## III. ວິທີປ້ອງກັນ

### 3.1 ວິທີກຳຈັດ

ທຳລາຍແຫຼ່ງທີ່ຢູ່ອາໃສຂອງແມງແຄງເຊັ່ນ :ອະນາໄມຖາງຫຍ້າຄັນນາໃຫ້ແປນ ແລະ ບໍລິເວນໄກ້ຄຽງ, ອ້ອມແຄມຄັນນາ .

- ຄວນນຳໃຊ້ແນວພັນເຂົ້າຊະນິດດຽວກັນ, ຕົກກ້າ ແລະ ດຳພ້ອມກັນ. ເປັນແນວພັນທີ່ແຂງແຮງ. ນຳໃຊ້ເຕັກນິກກະເສດສຸມ. ໃສ່ອັດຕາຝຸ່ນໃຫ້ຖືກຕ້ອງ ແລະ ປະຕິບັດຕາມວິຊາການຄວບຸມຫຍ້າເພືອໃຫ້ຕົ້ນເຂາແຂງແຮງຮັບການສະໜອງຝຸ່ນ ໄດ້ດີ ແລະ ເຮັດໃຫ້ຕົ້ນເຂົ້າອອກຮວງພ້ອມກັນ.
- ແນະນຳຕົກກ້າກ່ອນໝູ່ ແລະ ປັກດຳກ່ອນໝູ່ເປັນແປງນ້ອຍປະມານ 3X5 ແມັດ ໃນບໍລິເວນນາຕົວຢ່າງ ມີປະມານ 5—10 ຮຕ ແນະນຳໃຫ້ມີແປງນ້ອຍທີ່ດຳກ່ອນ 2—3 ຈຸດໃນບໍລິເວນແຄມປ່າ ຫຼືແຄມນາທີ່ດຳນຳຫຼັງເພື່ອລໍໃຫ້ແມງແຄງມາຕອມເຂົ້າທີ່ອອກດອກກ່ອນແລ້ວທ່ານກໍ່ຈະງ່າຍ ໃນການປາບປາມແມງຈະໃຊ້ຢາ ສີດຖືກໂຕຕາຍຫຼືໃຊ້ສະຫວິງແກ່ງເອົາກໍ່ໄດ້ເພາະວ່າບໍລິເວນແຄບໃຊ້ວິທີການນຮ້ຈະຫຼຸດຜ່ອນປະຊາກອນແມງແຄງຫຼາຍທີ່ສຸດ .

### 3.2 ວິທີການເຕັກນິກຕ່າງໆ

- ຖ້າຫາກພົບເຫັນແມງແຄງຕາມທົ່ງນາບໍ່ຈຳເປັນຈະຕ້ອງລໍຖ້າໃຫ້ເຂົ້າອອກຮວງຈຶ່ງຈະຈຳກັດ. ຄວນເລີ້ມກຳຈັດແຕ່ຫົວທີຄວນນຳໃຊ້ສະຫວິງແກ່ງໃນທຸກໆຕອນເຊົ້າຈະເຮັດໃຫ້ປະຊະກອນຂອງແມງແຄງຫຼຸດລົງ, ໃຊ້ວິທີການນີ້ແມ່ນມີປະສິດຖິຜົນສູງ. ແລ້ວຍັງຮັກສາສະພາບແວດລ້ອມດ້ຍອີກ.
- ຖ້າພົບເຫັນໃນຊ່ວງໄລຍະເຂົ້າອອກຮວງແລ້ວຍັງນຳໃຊ້ເຫຍື່ອລໍ້ເພື່ອໃຫ້ແມງແຄງໄດ້ຮັບກິ່ນ ແລ້ວມາຕອມກະປູເນົ່າກົບເນົ່າ. ຫອຍເນົ່າ ຫຼື ສັດຕາຍມີກິ່ນມາສຽບໃສ່ຫຼັກໄມ້ສູງກວ່າຕົ້ນເຂົ້າເລັກນ້ອຍແລ້ວໄປປັກຕາມຄັນນາດ້ວຍໄລຍະຫ່າງກັນປະມານ 10—15 ບາດກ້າວຍ່າງ. ແຕ່ລະມື້ຈະຕ້ອງລົງໄປຕິດຕາມ ແລະ ກວດກາເບິ່ງ. ຖ້າພົບເຫັນແມງແຄງມາຕອມຕາມຫຼັກທີ່ປັກໄວ້ ແນະນຳໃຫ້ໃຊ້ສະຫວິງມາງວມເອົາແລ້ວທຳລາຍຖີ້ມ. ຖ້າບໍາທຳລາຍຖີ້ມມັນຈະຂະຫຍາຍຕົວໄວເພາະມັນໄດ້ກິນອາຫານອີ່ມ .

### 3.3 ການປ້ອງກັນທີ່ໃຊ້ສານເຄມີ

ໃນເມື່ອຫາກພົບເຫັນໃນຊ່ວງເຂົ້າຖອກຮວງເປັນນ້ຳນົມປະມານ 4—5ໂຕ/ມ$^2$ ແນະນຳໃຫ້ໃຊ້ຢາຟາສະແທກໃນອັດ

ຕາ 1ບ່ວງແກງ/ນ້ຳ 20 ລິດ ສີດໃນເວລາ 6—8ໂມງເຊົ້າ ແລະຕອນແລງ ຫຼື ນຳໃຊ້ຢາວີດີໄອ 60 % ມາສີດດ້ວຍອັດຕາ 3—4 ບ່ວງແກງ/ ນ້ຳ 20 ລິດ ຫຼື ຈະໃຊ້ເຊວິນ 85% ໃນອັດ ຕາ 2 ກິໂລກຣາມ/ ຮຕ .


**Laos Extension for Agriculture Project**
**P.O. Box 9159**
**Vientiane, Lao P.D.R.**



ກະຊວງກະສິກຳ ແລະ ປ່າໄມ້
ກອງສົ່ງເສີມກະສິກຳ ແລະ ປ່າໄມ້ ແຫ່ງຊາດ
ພະແນກສົ່ງເສີມ ແລະ ຄຸ້ມຄອງໂຄງການ


## ຂໍ້ແນະນຳ

# ການປ້ອງກັນ ແລະ ກຳຈັດແມງແຄງຍາວໃນນາເຂົ້າ



ຈັດຕັ້ງປະຕິບັດໂດຍ *CETDU*
(ໜ່ວຍງານຝຶກອົບຮົມສົ່ງເສີມ ຂັ້ນສູນກາງ)

ຮ່ວມກັບ:

ໂຄງການ ສົ່ງເສີມ ກະສິກຳ (*LEAP*)